# 4.3.2 ຂໍ້ບັງຄັບດ້ານກົດໝາຍ ແລະ ດ້ານອື່ນໆ

## ດ້ວຍເຫດໃດເງື່ອນໄຂດ້ານກົດໝາຍຈຶ່ງເປັນສິ່ງຈຳເປັນ?

ໜຶ່ງໃນບັນດາຄຳໝັ້ນສັນຍາ ທີ່ອົງການຈັດຕັ້ງຕ້ອງໄດ້ກຳນົດຢູ່ໃນນະໂຍບາຍດ້ານສິ່ງແວດລ້ອມ ກໍແມ່ນການເຄົາລົບຕໍ່ຂໍ້ກຳນົດກົດລະບຽບ ແລະ ກົດໝາຍທີ່ສຳຄັນ. ເພື່ອຮັບປະກັນການເຄົາລົບຕໍ່ກົດໝາຍນັ້ນ, ອັນທຳອິດ ແມ່ນຕ້ອງມີຄວາມຮັບຮູ້ເຂົ້າໃຈຕໍ່ກົດໝາຍ ແລະ ຂໍ້ບັງຄັບຕ່າງໆ. ພ້ອມກັນນັ້ນ, ກົດໝາຍ ແລະ ເງື່ອນໄຂຕ່າງໆທີ່ກ່ຽວຂ້ອງຕ້ອງໄດ້ຮັບຄວາມເອົາໃຈໃສ່ ໃນເວລາທີ່ອົງການຈັດຕັ້ງຈັດວາງ ຈຸດປະສົງ ແລະ ເປົ້າໝາຍຂອງຕົນ. ນອກຈາກການກຳນົດຕ່າງໆຂອງ ISO 14001 ນີ້ແລ້ວ, ຄວາມລົ້ມເຫຼວໃນການເຄົາລົບຕໍ່ກົດໝາຍ, ຈະດ້ວຍຄວາມຮູ້ເທົ່າບໍ່ເຖິງການ ຫຼື ການລະເລີຍບໍ່ເອົາໃຈໃສ່, ກໍສາມາດມີຄຸນຄ່າຫຼາຍທີ່ສຸດຕໍ່ອົງການຈັດຕັ້ງ ອາດຈະໃນຮູບແບບ ຂອງ ເງິນຕຣາ, ເວລາ, ການເສັຽຫາຍຂອງຜະລິດຕະພັນ, ເສັຽຄວາມໄວ້ວາງໃຈຈາກລູກຄ້າ, ເສັຽພາບພົດ-ຊື່ສຽງ, ແລະ ການພົວພັນກັບສາທາລະນະ. ອີກດ້ານນຶ່ງ, ການເຄົາລົບຕໍ່ຂໍ້ກຳນົດກົດລະບຽບ ແລະ ກົດໝາຍດ້ານສິ່ງແວດລ້ອມແມ່ນສິ່ງທີ່ຖືກຕ້ອງທີ່ຄວນກະທຳ.

## ຄວາມໝາຍຂອງເງື່ອນໄຂດ້ານກົດໝາຍ ແລະ ດ້ານອື່ນໆ

*ເງື່ອນໄຂດ້ານກົດໝາຍ*

ອັນນີ້ ກວມເອົາ:

- ກົດໝາຍປະຈຳທ້ອງຖິ່ນ, ພາກພື້ນ/ເຂດແຂວງ ແລະ ແຫ່ງຊາດ, ແລະ ບັນດາຂໍ້ກຳນົດ ທີ່ກຳນົດເຖິງເຫດການດ້ານສິ່ງແວດລ້ອມ ແລະ ລະບົບນິເວດ.
- ໃບອະນຸຍາດ, ຄຳອະນຸຍາດ ແລະ ການຮັບຮອງ ໃນການປະຕິບັດງານ ທີ່ອອກໃຫ້ໂດຍລັດຖະບານ.
- ມາດຕະຖານ ແລະ ກົດບັດສາກົນ (ຂໍ້ຕົກລົງທີ່ກຽວໂຕ (KYOTO) ວ່າດ້ວຍທາດອາຍເຮືອນກະຈົກ; ກົດບັດທີ່ມົງເຕຣອານ (MONTREAL) ວ່າດ້ວຍສານທຳລາຍຊັ້ນ OZONE; ກົດບັດທີ່ບາແຊນ (BASEL) ກ່ຽວກັບການຄ້າສາກົນ ວ່າດ້ວຍ ສິ່ງເສດເຫຼືອອັນຕະລາຍ; ກົດບັດວ່າດ້ວຍຊີວະນາໆພັນກົດບັດການຄ້າກ່ຽວກັບປະເພດສັດ ຫຼື ພືດ ທີ່ຖືກໄພຂົ່ມຂູ່).
- ຂໍ້ບັງຄັບດ້ານກົດໝາຍທີ່ຈັດຢູ່ໃນຂໍ້ສັນຍາທີ່ອົງການຈັດຕັ້ງເປັນຄູ່ສັນຍາ.

*ເງື່ອນໄຂດ້ານອື່ນໆ*

ອັນນີ້ ອາດກວມເອົາ:

- ນະໂຍບາຍ ແລະ ຄຳໝັ້ນສັນຍາ ດ້ານສິ່ງແວດລ້ອມ ທີ່ສ້າງຂຶ້ນໂດຍບັນດາສະມາຄົມອຸດສະຫະກຳ ທີ່ອົງການຈັດຕັ້ງເປັນສະມາຊິກ.
- ລະບຽບການປະຕິບັດງານໃນບັນດາອຸດສາຫະກຳ ທີ່ອົງການຈັດຕັ້ງມີສ່ວນຮ່ວມ (ຊັ່ນ ເຫຍື່ອກະດາດ ແລະ ເຈັ້ຽ, ການຂຸດຄົ້ນບໍ່ແຮ່, ນ້ຳມັນ ແລະ ອາດແກສ, ການຜະລິດທາດເຄມີ ແລະ ການຜະລິດຢາປົວພະຍາດ.
- ບັນດາຂໍ້ຕົກລົງທີ່ບໍ່ແມ່ນດ້ານກົດໝາຍ ກັບລັດຖະບານ, ແລະ ກັບບັນດາຊຸມຊົນ.
- ຂໍ້ຕົກລົງການເຄົາລົບແບບສະໝັກໃຈ, ຕົວຢ່າງ ຂໍ້ຕົກລົງກັບຊຸມຊົນ ຫຼື ກັບອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO).
- ນະໂຍບາຍພາຍໃນຂອງບໍລິສັດ ແລະ ວິທີດຳເນີນງານ ເຊິ່ງກວມເອົາ ບັນດານະໂຍບາຍ ຂອງອົງການຈັດຕັ້ງແມ່.

## ການຕິດຕາມ ແລະ ບຳລຸງຮັກສາຄວາມຮັບຮູ້ເຂົ້າໃຈ ຕໍ່ເງື່ອນໄຂດ້ານກົດໝາຍ

*ການຕິດຕາມ ເງື່ອນໄຂດ້ານກົດໝາຍ*

ມັນປະກົດມີຫຼາຍເສັ້ນທາງ ທີ່ສາມາດຖືກນຳໃຊ້ ເພື່ອໃຫ້ໄດ້ມາ ແລະ ຮັບປະກັນການຍອມຮັບເງື່ອນໄຂດ້ານກົດໝາຍ ແລະ ເງື່ອນໄຂອື່ນໆ. ບຸກຄະລະກອນ ໃນພະແນກກົດໝາຍຂອງອົງການຈັດຕັ້ງ ອາດໃຫ້ຄວາມຊ່ວຍເຫຼືອ ໃນວຽກນີ້, ຕົວຢ່າງ ກວດເບິ່ງເອກະສານດ້ານກົດໝາຍ ເພື່ອໃຫ້ຖືກຕາມສະບັບຫລ້າສຸດ ແລະ ການຄາດຄະເນຫລ້າສຸດ, ແລະ ຄວນເອົາໃຈໃສ່ໃນການທົບທວນ ແລະ ຕຳນິຕິຊົມ ລາຍການບັນທຶກດ້ານກົດໝາຍ ເຊິ່ງອາດຈະມີການ

ພິມອອກໃນລະດັບຕໍ່ມາ. ມັນອາດຈະເປັນປະໂຫຍດໃນການນຳໃຊ້ການບໍລິການຂອງ ສາຂາຄົ້ນຄ້ວາດ້ານກົດໝາຍການຄ້າ ເພື່ອກຳນົດສິ່ງອ້າງອີງທີ່ເໝາະສົມແກ່ການກຳນົດກົດໝາຍ ແລະ ຂໍ້ກຳນົດກົດລະບຽບຕ່າງໆ.

ສະມາຄົມອຸດສະຫະກຳທີ່ອົງການຈັດຕັ້ງເປັນສະມາຊິກອາດເປັນແຫຼ່ງທີ່ເປັນປະໂຫຍດ ໃນການໃຫ້ຂໍ້ມູນກ່ຽວກັບກົດໝາຍ ແລະ ຂໍ້ກຳນົດກົດລະບຽບຕ່າງໆ ທີ່ກະທົບໃສ່ກິດຈະກຳສະເພາະປະເພດຕ່າງໆ ທີ່ອົງການຈັດຕັ້ງມີສ່ວນຮ່ວມ; ແລະ ການສະເໜີປ່ຽນແປງດ້ານກົດໝາຍ. ການພົບປະທາງສ່ວນຕົວແບບປົກກະຕິກັບບຸກຄົນສຳຄັນ ໃນພະແນກການທີ່ເໝາະສົມຂອງລັດຖະບານກໍສາມາດຊ່ວຍໃຫ້ອົງການຈັດຕັ້ງງ່ຽງຫູຟັງ ແລະ ລໍຖ້າການລິເລີ່ມຂອງລັດຖະບານປະກົດຂຶ້ນ.

### *ສ້າງ ແລະ ບຳລຸງຮັກສາຄວາມຮັບຮູ້ດ້ານກົດໝາຍໃນອົງການຈັດຕັ້ງ*

ໃນເມື່ອລະບົບການໃຫ້ຂໍ້ມູນຂ່າວສານ ທີ່ແທດເໝາະກ່ຽວກັບຂໍ້ກຳນົດກົດລະບຽບ ແລະ ກົດໝາຍດ້ານສິ່ງແວດລ້ອມ ໄດ້ຖືກຈັດວາງແລ້ວ , ວິທີປະຕິບັດເພື່ອຊອກຫາບັນດາເອກະສານຕ່າງໆນັ້ນ ກໍຕ້ອງໄດ້ຮັບການຕິດຕັ້ງ, ການສະຫຼຸບສັງລວມບັນດາພາກສ່ວນຕ່າງໆປະຈຳແຕ່ລະມື້, ແລະ ການສະໜອງຂໍ້ມູນຂ່າວສານໃຫ້ແກ່ທຸກໆຄົນໃນອົງການຈັດຕັ້ງທີ່ຕ້ອງການຮູ້ຈັກຄວາມຮັບຜິດຊອບຂອງເຂົາເຈົ້າໃນການບຳລຸງຮັກສາການເຄົາລົບຕໍ່ກົດໝາຍ. ອັນນີ້ ຕາມປົກກະຕິແລ້ວ ກໍລວມມີ ຜູ້ປະຕິບັດງານອາວຸໂສ, ຫົວໜ້າພະແນກປະຕິບັດງານ, ບຸກຄົນໃນພະແນກການດ້ານສິ່ງແວດລ້ອມ ແລະ ການຈັດການກ່ຽວກັບສິ່ງສົກກະປົກ, ແລະ ກໍຍັງກວມເອົາພະນັກງານໃນພາກສວານຂົນຖ່າຍ/ພາກສ່ວນຮັບ ແລະ ພາກສ່ວນຈັດຊື້/ພາກສ່ວນສະໜອງ, ພາກສ່ວນບຳລຸງຮັກສາ, ພາກສ່ວນຝຶກອົບຮົມ ແລະ ພາກສ່ວນຊັບພະຍາກອນມະນຸດ.

ການຕິດຕາມການປະຕິບັດເງື່ອນໄຂດ້ານກົດໝາຍຄວນໄດ້ຮັບການສ້າງຕັ້ງ ໄປພ້ອມກັບການພົວພັນກັບການປະຕິບັດງານທີ່ກົງປະເດັນ ກັບການເຄື່ອນໄຫວດ້ານສິ່ງແວດລ້ອມ ແລະ ການກະທົບດ້ານສິ່ງແວດລ້ອມ. ຈາກນັ້ນເມື່ອ ຈຸດປະສົງ ແລະ ເປົ້າໝາຍດ້ານສິ່ງແວດລ້ອມໄດ້ຖືກຈັດວາງແລ້ວ ການເຄົາລົບດ້ານກົດໝາຍກໍຄວນໄດ້ຮັບການປະຕິບັດ.

## ສະຫຼຸບສັງລວມບັນດາຈຸດສຳຄັນຕ່າງໆ:

- ນະໂຍບາຍດ້ານສິ່ງແວດລ້ອມໄດ້ມອບໝາຍໃຫ້ອົງການຈັດຕັ້ງຕ້ອງມີຄວາມເຄົາລົບຕໍ່ກົດໝາຍ ແລະ ຂໍ້ກຳນົດກົດລະບຽບຕ່າງໆດ້ານສິ່ງແວດລ້ອມ ທີ່ສຳຄັນ.

- ໃນເວລາຈັດວາງຈຸດປະສົງ ແລະ ເປົ້າໝາຍດ້ານສິ່ງແວດລ້ອມນັ້ນ ອົງການຈັດຕັ້ງ ຕ້ອງຖືສຳຄັນຕໍ່ບັນດາເງື່ອນໄຂ ດ້ານ ກົດໝາຍ, ຂໍ້ກຳນົດກົດລະບຽບ ແລະ ດ້ານອື່ນໆ ທີ່ກ່ຽວຂ້ອງກັບການເຄົາລົບຕໍ່ສິ່ງແວດລ້ອມ.
- ຍ້ອນເຫດຜົນຂ້າງເທິງ, ອົງການຈັດຕັ້ງ ຈຶ່ງຕ້ອງມີວິທີການ ເພື່ອກຳນົດ, ເຂົ້າຫາ ແລະ ເຮັດໃຫ້ເໝາະສົມ-ທັນສະໄໝ ບັນດາເງື່ອນໄຂດ້ານກົດໝາຍ ແລະ ຂໍ້ກຳນົດກົດລະບຽບຕ່າງໆກ່ຽວກັບສິ່ງແວດລ້ອມ, ແລະ ຄຳໝັ້ນສັນຍາອັນອື່ນໆທີ່ເປັນຜົນເນື່ອງມາຈາກການຕົກລົງຂອງບັນດາສະມາຊິກຂອງສະມາຄົມອຸດສາຫະກຳ ກັບບັນດາພາກສ່ວນຕ່າງໆທີ່ມີຄວາມສົນໃຈ ແລະ ສັນຍາທີ່ກ່ຽວກັບຂໍ້ບັງຄັບຕ່າງໆດ້ານສິ່ງແວດລ້ອມ.
- ຄວນມີການມອບໝາຍຄວາມຮັບຜິດຊອບເພື່ອບຳລຸງຮັກສາການຕິດຕາມການປະຕິບັດເງື່ອນໄຂດ້ານກົດໝາຍ ແລະ ດ້ານອື່ນໆ.
- ຄວນມີການສະຫຼຸບສັງລວມກົດໝາຍຕາມສຳນວນແບບສາມັນຊົນທຳມະດາ ເພື່ອແຈກຢາຍໃຫ້ແກ່ບຸກຄະລາກອນໃນອົງການຈັດຕັ້ງ ເຊິ່ງເປັນຜູ້ທີ່ອາດມີຜົນກະທົບຕໍ່ສິ່ງແວດລ້ອມເວລາປະຕິບັດງານ, ແລະ ຜູ້ທີ່ສາມາດສ້າງ ຫຼື ສາມາດທຳລາຍການເຄົາຕໍ່ກົດໝາຍໂດຍການນຳໃຊ້ໃບອະນຸຍາດດ້ານສິ່ງແວດລ້ອມ ຫຼື ກົດໝາຍຕ່າງໆ ດ້ວຍການກະທຳ ຫຼື ການລະເລີຍບໍ່ເອົາຫົວຊາຂອງພວກເຂົາເຈົ້າ ຕໍ່ກົດໝາຍ.